ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ: 1436/ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 02 JUL 2019

# ໜັງສືແຈ້ງເຊີນປະມູນ

1. ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ), ມີຄວາມຕ້ອງການ ການບໍລິການ ປະກັນໄພເຂື່ອນ ສໍາລັບ 07 ເຂື່ອນ: ເຂື່ອນໄຟຟ້ານໍ້າຊອງ, ເຂື່ອນໄຟຟ້ານໍ້າງື່ມ 1, ເຂື່ອນໄຟຟ້ານໍ້າມັງ 3, ເຂື່ອນໄຟຟ້ານໍ້າເລີກ, ເຂື່ອນໄຟຟ້າແຊລະບໍາ ແລະ ເຂື່ອນໄຟຟ້າເຊເສັດ 1 ແລະ ເຂື່ອນໄຟຟ້າເຊເສັດ 2, ດ້ວຍການດໍາເນີນການປະມູນເປີດກວ້າງພາຍໃນ.
2. ການປະມູນ ຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງຂອງ ຜ-ຟຟລ ພາຍໃຕ້ລະບຽບຈັດຊື້-ຈັດຈ້າງ ຜ-ຟຟລ, ສະບັບລົງວັນທີ 19/02/2018.
3. ຜ-ຟຟລ ຂໍເຊີນບັນດາບໍລິສັດປະກັນໄພທີ່ມີເງື່ອນໄຂ, ມີໃບອະນຸຍາດດໍາເນີນທຸລະກິດຖືກຕ້ອງຕາມກົດໝາຍ ແລະ ພົວພັນກັບ ການບໍລິການປະກັນໄພດັ່ງກ່າວ ເຂົ້າຮ່ວມ.
4. ບໍລິສັດປະກັນໄພທີ່ມີເງື່ອນໄຂ ສົນໃຈ ສາມາດຕິດຕໍ່ພົວພັນ ແລະ ກວດກາເບິ່ງເອກະສານປະມູນໄດ້ທີ່ ສໍານັກງານໃຫຍ່ ຜ-ຟຟລ, ຝ່າຍແຜນການ, ພະແນກຈັດຊື້, ໃນວັນລັດຖະການ, ນັບຈາກວັນທີ 08/07/2019 ເປັນຕົ້ນໄປ, ຕອນເຊົ້າເວລາ 08:30 ໂມງ ເຖິງ 12:00 ໂມງ ແລະ ຕອນບ່າຍ 13:00-17:00 ໂມງ . ສໍານັກງານ ຜ-ຟຟລ ຕັ້ງຢູ່ ຖະໜົນມິດຕະພາບ ລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ຕູ້ ປ.ນ 2392, ນະຄອນຫຼວງ ວຽງຈັນ ສປປ. ລາວ ໂທລະສັບ: (85621) 316 142, ໂທລະສານ: (85621) 316 141.
5. ບໍລິສັດ ປະກັນໄພ ທີ່ຕ້ອງການຊື້ເອກະສານປະມູນ, ຕ້ອງຍື່ນໜັງສືສະເໜີ ຊື້ຊອງປະມູນ ເຖິງ ຜ-ຟຟລ ຕາມທີ່ຢູ່ ທີ່ລະບຸໃນຂໍ້ 5, ເລີ່ມແຕ່ວັນທີ 08/07/2019 ເປັນຕົ້ນໄປ, ໃນວັນ ແລະ ເວລາທີ່ລະບຸໃນຂໍ້ 5, ໃນລາຄາ 800.000 (ແປດແສນ) ກີບ/ຊຸດ, ວິທີການຊໍາລະຕ້ອງ ຊໍາລະເປັນເງິນສົດ, ໂດຍຈໍານວນເງິນດັ່ງກ່າວນີ້ ຜ-ຟຟລ ຈະບໍ່ມີການສົ່ງຄືນ.
6. ການລົງເບິ່ງສະຖານທີ່, ເກັບກໍາຂໍ້ມູນ ແລະ ສໍາຫຼວດຄວາມສ່ຽງໃນແຕ່ລະເຂື່ອນ ບໍ່ຖືເປັນພາກບັງຄັບ. ການລົງເບິ່ງສະຖານທີ ຈະດໍາເນີນລະຫວ່າງວັນທີ 15/07/2019 ເຖິງວັນທີ 20/07/2019, ລາຍລະອຽດການເດີນທາງ ຄັດຕິດໃນເອກະສານປະມູນ. ໂດຍຄ່າໃຊ້ຈ່າຍຕ່າງໆທີ່ເກີດຂຶ້ນ ແລະ ການເດີນທາງທັງໝົດແມ່ນຄວາມຮັບຜິດຊອບຂອງຜູ້ເຂົ້າຮ່ວມປະມູນ.
7. ຊອງປະມູນຕ້ອງສົ່ງໃຫ້ຕາມທີ່ຢູ່ ທີ່ລະບຸໃນຂໍ້ 5, ກ່ອນເວລາ 14:00 ໂມງ, ວັນທີ 12/08/2019. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້, ຜ-ຟຟລ ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນຈະໄດ້ເລີ່ມເປີດໃນເວລາ 14:00 ໂມງ, ວັນທີ 12/08/2019 ໂດຍຊ້ອງໜ້າຄະນະການຈັດຊື້ ຜ-ຟຟລ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັນປະມູນທີ່ສົນໃຈເຂົ້າຮ່ວມນໍາ.

ແທນ **ຜູ້ອໍານວຍການໃຫຍ່**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

**ດຣ. ບຸນສະຫຼອງ ສຸດທິດາຣາ**

**ຮອງຜູ້ອໍານວຍການໃຫຍ່**